ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 272 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 31 ທັນວາ 2024

# ລັດຖະດຳລັດ

## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການປັບປຸງມາດຕາ 18 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບປັບປຸງປີ 2015

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 155/ສພຊ, ລົງວັນທີ 12 ທັນວາ 2024 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການປັບປຸງມາດຕາ 18 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບປັບປຸງປີ 2015;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 28/ຄປຈ, ລົງວັນທີ 24 ທັນວາ 2024.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍການປັບປຸງມາດຕາ 18 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບປັບປຸງປີ 2015.

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ທອງລຸນ ສີສຸລິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 155 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 12 / 12 / 24

**ມະຕິ**
**ກອງປະຊຸມສະພາແຫ່ງຊາດ**
**ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການປັບປຸງມາດຕາ 18 ຂອງກົດໝາຍ ວ່າດ້ວຍການລົງທຶນຂອງລັດ ສະບັບປັບປຸງປີ 2015**

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍ ວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງ ກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການປັບປຸງມາດຕາ 18 ຂອງກົດໝາຍວ່າດ້ວຍ ການລົງທຶນຂອງລັດ ສະບັບປັບປຸງປີ 2015 ໃນວາລະຕອນເຊົ້າຂອງກອງປະຊຸມຄັ້ງວັນທີ 11 ທັນວາ 2024 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນເຊົ້າຂອງວັນທີ 12 ທັນວາ 2024.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການປັບປຸງມາດຕາ 18 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບປັບປຸງປີ 2015 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

ປອ ໄຊສົມພອນ ພົມວິຫານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 74 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 12 ທັນວາ 2024

# ກົດໝາຍວ່າດ້ວຍ
# ການປັບປຸງມາດຕາ 18 ຂອງກົດໝາຍວ່າດ້ວຍ
# ການລົງທຶນຂອງລັດ ສະບັບປັບປຸງປີ 2015

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດເນື້ອໃນການປັບປຸງມາດຕາ 18 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 72 /ສພຊ, ລົງວັນທີ 15 ທັນວາ 2015 ເພື່ອໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ແນໃສ່ເຮັດໃຫ້ການລົງທຶນທີ່ນຳໃຊ້ງົບປະມານຂອງລັດ ມີຄວາມໂປ່ງໃສ, ເສດຖະກິດມີສະຖຽນລະພາບ, ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ແກ່ທ້ອງຖິ່ນ ໃນການພິຈາລະນາອະນຸຍາດລົງທຶນຢ່າງມີປະສິດທິພາບ, ປະສິດທິຜົນ.

**ມາດຕາ 2 ມາດຕາຂອງກົດໝາຍທີ່ມີການປັບປຸງ**

ເນື້ອໃນມາດຕາຂອງກົດໝາຍ ທີ່ມີການປັບປຸງ ຄື:

**ມາດຕາ 18 ໂຄງການລົງທຶນຂອງລັດປົກກະຕິ**

ໂຄງການລົງທຶນຂອງລັດປົກກະຕິ ແມ່ນ ໂຄງການລົງທຶນຂອງລັດ ຂອງກະຊວງ, ອົງການລັດທຽບເທົ່າກະຊວງ ຫຼື ອົງການປົກຄອງທ້ອງຖິ່ນ ເພື່ອປະຕິບັດວຽກງານຈຸດສຸມທີ່ໄດ້ກຳນົດໃນແຜນພັດທະນາຂອງຕົນ.

ໂຄງການລົງທຶນຂອງລັດປົກກະຕິ ມີ ຫ້າປະເພດ ດັ່ງນີ້:

1. ໂຄງການລົງທຶນຂອງລັດປະເພດ I ແມ່ນ ໂຄງການທີ່ມີມູນຄ່າຫຼາຍກວ່າ 400,000,000,000 (ສີ່ຮ້ອຍຕື້) ກີບ ຂຶ້ນໄປ, ໄລຍະປະຕິບັດໂຄງການ ບໍ່ເກີນ ເຈັດປີ;

2. ໂຄງການລົງທຶນຂອງລັດປະເພດ II ແມ່ນ ໂຄງການທີ່ມີມູນຄ່າຫຼາຍກວ່າ 200,000,000,000 (ສອງຮ້ອຍຕື້) ກີບ ຫາ 400,000,000,000 (ສີ່ຮ້ອຍຕື້) ກີບ, ໄລຍະປະຕິບັດໂຄງການ ບໍ່ເກີນ ຫົກປີ;

3. ໂຄງການລົງທຶນຂອງລັດປະເພດ III ແມ່ນ ໂຄງການທີ່ມີມູນຄ່າຫຼາຍກວ່າ 100,000,000,000 (ໜຶ່ງຮ້ອຍຕື້) ກີບ ຫາ 200,000,000,000 (ສອງຮ້ອຍຕື້) ກີບ, ໄລຍະປະຕິບັດໂຄງການ ບໍ່ເກີນ ຫ້າປີ;

4. ໂຄງການລົງທຶນຂອງລັດປະເພດ IV ແມ່ນ ໂຄງການທີ່ມີມູນຄ່າຫຼາຍກວ່າ 50,000,000,000 (ຫ້າສິບຕື້) ກີບ ຫາ 100,000,000,000 (ໜຶ່ງຮ້ອຍຕື້) ກີບ, ໄລຍະປະຕິບັດໂຄງການ ບໍ່ເກີນ ສີ່ປີ;

5. ໂຄງການລົງທຶນຂອງລັດປະເພດ V ແມ່ນ ໂຄງການທີ່ມີມູນຄ່າແຕ່ 50,000,000,000 (ຫ້າສິບຕື້) ກີບ ລົງມາ, ໄລຍະປະຕິບັດໂຄງການ ບໍ່ເກີນ ສາມປີ.

ໂຄງການລົງທຶນຂອງລັດປະເພດ II, III, IV ແລະ V ນຳໃຊ້ພາກລາຍຈ່າຍລົງທຶນຂອງລັດປະຈຳປີ, ໂຄງການລົງທຶນຂອງລັດປະເພດ I ນຳໃຊ້ແຫຼ່ງທຶນອື່ນ ບໍ່ແມ່ນພາກລາຍຈ່າຍລົງທຶນຂອງລັດປະຈຳປີ ຕາມການຕົກລົງຂອງລັດຖະບານ.

**ມາດຕາ 3 ການປ່ຽນແທນເນື້ອໃນບາງມາດຕາຂອງກົດໝາຍ**

ກົດໝາຍສະບັບນີ້ ປ່ຽນແທນເນື້ອໃນມາດຕາ 18 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 72 /ສພຊ, ລົງວັນທີ 15 ທັນວາ 2015.

**ມາດຕາ 4 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

**ປອ ໄຊສົມພອນ ພົມວິຫານ**